ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເລກທີ 868 /ຫສນຍ

ນະຄອນຫຼວງວຽງຈັນ, ວັນທີ 06 ພຶດສະພາ 2024

# ແຈ້ງການ

ຮຽນ : - ບັນດາທ່ານ ສະມາຊິກລັດຖະບານ ທີ່ເຄົາລົບ ແລະ ນັບຖື.

- ທ່ານ ເຈົ້າຄອງນະຄອນຫລວງວຽງຈັນ ແລະ ບັນດາທ່ານ ເຈົ້າແຂວງ ໃນຂອບເຂດທົ່ວປະເທດ ທີ່ນັບຖື.

ເລື່ອງ: ທິດຊີ້ນຳຜັນຂະຫຍາຍຜົນຂອງກອງປະຊຸມໂຕະມົນ ປະຈຳປີ 2023 ພາຍໃຕ້ຫົວຂໍ້"ເລັ່ງລັດການຈັດຕັ້ງປະຕິບັດຜົນການທົບທວນກາງສະໄໝຂອງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX ເພື່ອບັນລຸເປົ້າໝາຍການພັດທະນາແບບຍືນຍົງ ແລະ ຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ຂອງ ສປປ ລາວ".

- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 574/ນຍ, ລົງວັນທີ 28 ກັນຍາ 2021;
- ອີງຕາມ ດຳລັດ ວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ທຶນການຊ່ວຍເຫລືອທາງການເພື່ອການພັດທະນາ ສະບັບເລກທີ 357/ລບ, ລົງວັນທີ 09 ຕຸລາ 2019;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍລະບຽບການ ແລະ ກົນໄກການເຮັດວຽກຂອງລັດຖະບານ ຊຸດທີ IX ສະບັບເລກທີ 41/ນຍ, ລົງວັນທີ 30 ເມສາ 2021;
- ອີງຕາມ ເອກະສານລາຍງານ ຂອງກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 571/ກຜທ, ລົງວັນທີ 6 ມີນາ 2024;
- ອີງຕາມ ທິດຊີ້ນຳ ຂອງທ່ານ ນາຍົກລັດຖະມົນຕີ ໃນຄັ້ງວັນທີ 29 ເມສາ 2024.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງທິດຊີ້ນຳ ຂອງທ່ານ ນາຍົກລັດຖະມົນຕີ ມາຍັງທ່ານຊາບ ດັ່ງນີ້: "ເຫັນດີຕາມຄຳເຫັນ ຂອງກະຊວງແຜນການ ແລະ ການລົງທຶນ ຄື: 1/. ມອບໃຫ້ກະຊວງແຜນການ ແລະ ການລົງທຶນ ເປັນເຈົ້າການປະສານສົມທົບ ບັນດາກະຊວງ/ຂະແໜງການ, ທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ ເອົາໃຈໃສ່: (1) ສືບຕໍ່ເອົາໃຈໃສ່ຈັດຕັ້ງຜັນຂະຫຍາຍຜົນການປະເມີນກາງສະໄໝ ຂອງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX ແລະ ແຜນການສືບຕໍ່ການຈັດຕັ້ງປະຕິບັດທ້າຍສະໄໝ ຮອດປີ 2025 ໂດຍສຸມໃສ່ 6 ເປົ້າໝາຍ 42 ວຽກຈຸດສຸມ ຂອງຜົນການປະເມີນກາງສະໄໝ ຂອງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX ທີ່ສະພາແຫ່ງຊາດ ໄດ້ຮັບຮອງ; (2) ສືບຕໍ່ພັດທະນາດ້ານໂຄງສ້າງເສດຖະກິດ ໃຫ້ເຂັ້ມແຂງມີສະຖຽນລະພາບ ແລະ ຈັດລຽງບູລິມະສິດ ໃຫ້ແທດເໝາະກັບສະພາບການພັດທະນາໃນປັດຈຸບັນ; (3) ຈັດລຽງບູລິມະສິດ ໃນການລົງທຶນທາງດ້ານຊັບພະຍາກອນມະນຸດ ເພື່ອປູພື້ນຖານໃຫ້ແກ່ການຂ້າມຜ່ານ ອອກຈາກສະຖານະ ພາບປະເທດດ້ອຍພັດທະນາຢ່າງໂລ່ງລ່ຽນ ໂດຍການຍົກສູງຄຸນນະພາບທາງດ້ານການສຶກສາ ແລະ ການພັດທະນາສີມືແຮງງານ ທີ່ມີຄຸນນະພາບ ພ້ອມທັງ ຮັບປະກັນການມີວຽກເຮັດງານທຳ ແລະ ຮອງຮັບການຂະຫຍາຍໂຕທາງດ້ານເສດຖະກິດ ຢ່າງຍືນຍົງ; (4) ສົ່ງເສີມການລົງທຶນ ທີ່ຕິດພັນກັບຄວາມຍືນຍົງທາງດ້ານສິ່ງແວດລ້ອມ, ຊຸກຍູ້ສ້າງຄວາມ

ເຂັ້ມແຂງໃນຂົງເຂດວັດທະນະທຳ-ສັງຄົມ ແລະ ການທ່ອງທ່ຽວ, ການປົກປ້ອງມໍລະດົກວັດທະນະທຳ ແລະ ສົ່ງເສີມສິດເສລີພາບຢ່າງເທົ່າທຽມ; (5) ສະໜັບສະໜູນພາກທຸລະກິດ ເພື່ອເປັນກຳລັງແຮງທາງດ້ານທຶນຮອນ ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX ໂດຍສະເພາະດ້ານເສດຖະກິດ, ຊັບພະຍາກອນມະນຸດ, ສິດທິຄົນພິການ, ການເກັບກູ້ລະເບີດທີ່ບໍ່ທັນແຕກ ແລະ ວຽກງານປົ່ນອ້ອມອື່ນໆ ທີ່ຕິດພັນກັບພາກທຸລະກິດ; (6) ປັບປຸງປະສິດທິພາບ ແລະ ບັນຍາກາດການລົງທຶນທີ່ເອື້ອອຳນວຍ ເພື່ອດຶງດູດ ແລະ ສ້າງມູນຄ່າຕາມທ່າແຮງ ຂອງ ສປປ ລາວ ເຊັ່ນ: ການລົງທຶນດ້ານພະລັງງານທົດແທນ, ການທ່ອງທ່ຽວທີ່ຕິດພັນກັບທຳມະຊາດ ແລະ ຄວາມຍືນຍົງ ເຊິ່ງທຳມະຊາດເປັນຊັບສິນ ຂອງ ສປປ ລາວ ຕ້ອງປົກປັກຮັກສາ ແລະ ມີແບບແຜນການນຳໃຊ້ໃຫ້ດີ; (7) ການນຳໃຊ້ການຊ່ວຍເຫຼືອທາງການ ເພື່ອການພັດທະນາ ໃຫ້ມີປະສິດທິຜົນສູງສຸດ ໂດຍຜ່ານການຈັດຕັ້ງປະຕິບັດແຜນດຳເນີນງານຖະແຫຼງການວຽງຈັນ ວ່າດ້ວຍການເປັນຄູ່ຮ່ວມເພື່ອການພັດທະນາທີ່ມີປະສິດທິຜົນ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025); (8) ເພີ່ມທະວີຈັດຕັ້ງປະຕິບັດ ບັນດາ 14 ຕົວຊີ້ບອກ ຂອງແຜນດຳເນີນງານຖະແຫຼງການວຽງຈັນ ວ່າດ້ວຍການເປັນຄູ່ຮ່ວມເພື່ອການພັດທະນາທີ່ມີປະສິດທິຜົນ ໃຫ້ບັນລຸຕາມເປົ້າໝາຍ ໂດຍສະເພາະ ປັບປຸງກົນໄກການຕິດຕາມ ແລະ ລາຍງານ ການຈັດຕັ້ງປະຕິບັດແຜນດຳເນີນງານດັ່ງກ່າວ; (9) ເພີ່ມທະວີປະສິດທິຜົນຂອງການພັດທະນາທຸກຮູບແບບ ແລະ ປະກອບສ່ວນເຂົ້າໃນການບັນລຸເປົ້າໝາຍການພັດທະນາແບບຍືນຍົງ (SDGs); (10) ສືບຕໍ່ຈັດຕັ້ງປະຕິບັດກົນໄກການປະສານງານຂະບວນການໂຕະມົນ ແລະ ຄຳແນະນຳຂະບວນການໂຕະມົນ ໂດຍສະເພາະກອງປະຊຸມປຶກສາຫາລື ດ້ານວິຊາການ ກັບບັນດາກອງເລຂາ 10 ໜ່ວຍງານຂະແໜງການ ປະຈຳໄຕມາດ ເພື່ອຕິດຕາມການຈັດຕັ້ງປະຕິບັດແຜນວຽກປະຈຳປີ, ຄວາມຄືບໜ້າຂອງການຜັນຂະຫຍາຍຜົນຂອງກອງປະຊຸມໂຕະມົນ ແລະ ສັງລວມບົດລາຍງານຂອງໜ່ວຍງານຂະແໜງການ ເພື່ອປະກອບເຂົ້າເປັນຂໍ້ມູນສຳລັບກອງປະຊຸມປະຈຳປີ; (11) ເຜີຍແຜ່ຄຳແນະນຳຂະບວນການໂຕະມົນ ຢ່າງທົ່ວເຖິງຢູ່ສູນກາງ ແລະ ທ້ອງຖິ່ນ; (12) ຄຸ້ມຄອງການຊ່ວຍເຫຼືອທາງການເພື່ອການພັດທະນາ ຕ້ອງຈັດຕັ້ງປະຕິບັດໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ລວມທັງເວັບໄຊ ຂະບວນການໂຕະມົນ ພ້ອມທັງ ອັບເດດຂໍ້ມູນ ຢ່າງເປັນລະບົບຕະຫຼອດເວລາ.

2/. ມອບໃຫ້ກະຊວງການຕ່າງປະເທດ ເປັນເຈົ້າການປະສານສົມທົບກັບ ບັນດາກະຊວງ/ຂະແໜງການ, ທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງເອົາໃຈໃສ່: (1) ນຳໃຊ້ກາລະໂອກາດໃນການເປັນປະທານອາຊຽນ ໃນປີນີ້ ເພື່ອຊຸກຍູ້ສົ່ງເສີມບັນດາຍຸດທະສາດການພັດທະນາ ແລະ ຟື້ນຟູເສດຖະກິດ ຂອງ ສປປ ລາວ ທີ່ຕິດພັນກັບວາລະສາກົນ ໃຫ້ຖືກນຳໃຊ້ຢ່າງມີປະສິດທິຜົນ ໂດຍສະເພາະໃນຂອບອາຊຽນ; (2) ນຳໃຊ້ຄວາມໄດ້ປຽບທາງດ້ານຍຸດທະສາດທີ່ຕັ້ງ, ຄວາມອຸດົມສົມບູນທາງດ້ານຊັບພະຍາກອນທຳມະຊາດ ຊີວະນານາພັນ ເພື່ອສະໜັບສະໜູນການຫັນນະໂຍບາຍຈາກປະເທດທີ່ບໍ່ມີຊາຍແດນຕິດຈອດກັບທະເລໃຫ້ເປັນປະເທດທີ່ມີການເຊື່ອມຈອດ ເພື່ອຮັບປະກັນການອອກຈາກສະຖານະພາບປະເທດດ້ອຍພັດທະນາ ຢ່າງມີສະຖຽນລະພາບ ແລະ ຍືນຍົງ; (3) ເຊື່ອມສານຍຸດທະສາດຂ້າມຜ່ານອອກຈາກສະຖານະພາບປະເທດດ້ອຍພັດທະນາ ຢ່າງໂລ່ງລ່ຽນ ເພື່ອໃຫ້ສອດຄ່ອງກັບຜົນຂອງກອງປະຊຸມລະດັບສູງ ອົງການສະຫະປະຊາຊາດ ວ່າດ້ວຍປະເທດດ້ອຍພັດທະນາ ຄັ້ງທີ 5; (4) ຂົນຂວາຍການສະໜັບສະໜູນ ແລະ ການຮ່ວມມື ກັບບັນດາປະເທດຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງສາກົນອື່ນໆ; (5) ເພີ່ມທະວີການເຂົ້າເຖິງ ແລະ ປະສານງານກັບບັນດາຄູ່ຮ່ວມພັດທະນາ ໂດຍສະເພາະແມ່ນແຫຼ່ງທຶນທີ່ຈະຊ່ວຍສະໜັບສະໜູນການພັດທະນາໃນໄລຍະການຂ້າມຜ່ານ.

3/. ມອບໃຫ້ກະຊວງການເງິນ ແລະ ທະນາຄານແຫ່ງ ສປປ ລາວ ເປັນເຈົ້າການປະສານສົມທົບກັບບັນດາກະຊວງ/ຂະແໜງການ, ທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ ເອົາໃຈໃສ່: (1) ພັດທະນາດ້ານໂຄງສ້າງເສດຖະກິດ ໃຫ້ເຂັ້ມແຂງມີສະຖຽນລະພາບ ແລະ ຈັດລຽງບູລິມະສິດ ໃຫ້ແທດເໝາະກັບສະພາບການພັດທະນາ ໂດຍດຳເນີນການປະຕິຮູບການຄຸ້ມຄອງການເງິນພາກລັດ ເພື່ອໃຫ້ສອດຄ່ອງກັບສະພາບເສດຖະກິດໃນປັດຈຸບັນ ໂດຍການລະດົມລາຍຮັບ, ສະຖຽນລະພາບດ້ານການເງິນ, ການປັບໂຄງສ້າງໜີ້ສິນ, ເພີ່ມທະວີການປະສານສົມທົບ ລະຫວ່າງ ພາກລັດ-ເອກະຊົນ, ຄວາມໂປ່ງໃສ, ການແຂ່ງຂັນ ແລະ ການຈັດສັນລາຍຈ່າຍໃຫ້ແກ່ພາກສັງຄົມ ຢ່າງມີປະສິດທິຜົນກວ່າ; (2) ເພີ່ມທະວີຄວາມຫຼາກຫຼາຍຂອງການພັດທະນາທາງດ້ານການເງິນ ໂດຍສຸມໃສ່ຫັນເປັນທັນສະໄໝແບບດີຈິຕອນ ເປັນຕົ້ນ ຍົກລະດັບວຽກງານການເກັບລາຍຮັບທາງດ້ານພາສີ ແລະ ສ່ວຍສາ

ອາກອນ; (3) ສ້າງຄວາມດຸ່ນດ່ຽງທາງດ້ານເສດຖະກິດ, ປັບປຸງປະສິດທິພາບ ແລະ ບັນຍາກາດການລົງທຶນທີ່ເອື້ອອຳນວຍ ເພື່ອດຶງດູດ ແລະ ສ້າງມູນຄ່າຕາມທ່າແຮງ ຂອງ ສປປ ລາວ.

4/. ມອບໃຫ້ກະຊວງສຶກສາທິການ ແລະ ກິລາ ເປັນເຈົ້າການປະສານສົມທົບກັບ ບັນດາກະຊວງ/ຂະແໜງການ, ທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງເອົາໃຈໃສ່: (1) ຈັດລຽງບູລິມະສິດ ໃນການລົງທຶນທາງດ້ານຊັບພະຍາກອນມະນຸດ ເພື່ອປູພື້ນຖານ ໂດຍການຍົກສູງຄຸນນະພາບທາງດ້ານການສຶກສາ ແລະ ການພັດທະນາສີມືແຮງງານ ທີ່ມີຄຸນນະພາບ ພ້ອມຮັບປະກັນການມີວຽກເຮັດງານທຳ ແລະ ຮອງຮັບການຂະຫຍາຍໂຕທາງດ້ານເສດຖະກິດ ຢ່າງຍືນຍົງ; (2) ກຳນົດແຜນບູລິມະສິດ ເພື່ອຈັດສັນຊັບພະຍາກອນ ທີ່ມີຈຳນວນຈຳກັດ ໃຫ້ມີປະສິດທິພາບ ໂດຍສະເພາະການປະເມີນຄືນຄວາມຕ້ອງການບຸກຄະລາກອນໃນເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ, ສືບຕໍ່ປັບປຸງຍົກລະດັບການຄຸ້ມຄອງ ແລະ ການບໍລິຫານຂະແໜງການສຶກສາໃຫ້ມີຄຸນນະພາບ; (3) ເພີ່ມທະວີການນຳໃຊ້ລະບົບຂໍ້ມູນຂ່າວສານ ແລະ ເຕັກໂນໂລຊີ (ເອກະສານຮັບໃຊ້ການຮຽນການສອນ, ຂໍ້ມູນຂ່າວສານຕະຫຼາດແຮງງານ) ແລະ ເຊື່ອມໂຍງບັນດາຖານຂໍ້ມູນຕ່າງໆຂອງບັນດາຂະແໜງການເຂົ້າກັນ; (4) ໃຫ້ບູລິມະສິດໃນການພັດທະນາວິຊາຊີບຄູຢ່າງຕໍ່ເນື່ອງ, ການຄຸ້ມຄອງໂຮງຮຽນທີ່ເຂັ້ມແຂງ ແລະ ເພີ່ມທະວີຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດ ແລະ ການແຈກຢາຍຄູສອນທີ່ມີຄວາມເທົ່າທຽມກັນ; ໃຫ້ຄວາມສຳຄັນຕໍ່ການສຶກສາໄວເດັກ ແລະ ປະຖົມສຶກສາ.

5/. ມອບໃຫ້ກະຊວງສາທາລະນະສຸກ ເປັນເຈົ້າການປະສານສົມທົບກັບ ບັນດາກະຊວງ/ຂະແໜງການ, ທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງເອົາໃຈໃສ່: (1) ເພີ່ມທະວີການນຳໃຊ້ລະບົບຂໍ້ມູນຂ່າວສານ ແລະ ເຕັກໂນໂລຊີ (ຂໍ້ມູນຂ່າວສານດ້ານສຸຂະພາບ, ເຕັກໂນໂລຊີສຳລັບການກວດສຸຂະພາບ) ແລະ ເຊື່ອມໂຍງບັນດາຖານຂໍ້ມູນຕ່າງໆຂອງບັນດາຂະແໜງການເຂົ້າກັນ ເພື່ອເປັນບ່ອນອີງໃນດ້ານນະໂຍບາຍ; (2) ສົ່ງເສີມການເຂົ້າເຖິງການບໍລິການດ້ານສາທາລະນະສຸກ, ການຄຸ້ມຄອງສຸຂະພາບຢ່າງທົ່ວເຖິງ ໂດຍສະເພາະຍົກລະດັບຄວາມຮູ້ຄວາມສາມາດຂອງບຸກຄະລາກອນທາງການແພດ ແລະ ການຮັກສາສຸຂະພາບຂັ້ນຕົ້ນ ເພື່ອຮັບມືກັບການລະບາດຂອງພະຍາດຕ່າງໆ; (3) ເອົາໃຈໃສ່ຊຸກຍູ້ການຈັດຕັ້ງປະຕິບັດແຜນບູລິມະສິດຂະແໜງການສາທາລະນະສຸກ ໂດຍເລັ່ງໃສ່ໃຫ້ບັນລຸ 11 ຕົວຊີ້ວັດຫຼັກການປະກັນສຸຂະພາບ ທີ່ໄດ້ຮັບອະນຸມັດຈາກສະພາແຫ່ງຊາດ ແລະ ບັນລຸເປົ້າໝາຍການພັດທະນາແບບຍືນຍົງ (SDGs) ໃນປີ 2030; (4) ເພີ່ມທະວີການປະສານງານລະຫວ່າງ ກະຊວງສາທາລະນະສຸກ, ກະຊວງການເງິນ ແລະ ກະຊວງແຜນການ ແລະ ການລົງທຶນ ເພື່ອອຳນວຍຄວາມສະດວກໃນການສະໜັບສະໜູນງົບປະມານ ຢ່າງພຽງພໍໃຫ້ແກ່ຂະແໜງສາທາລະນະສຸກ.

6/. ມອບໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນເຈົ້າການປະສານສົມທົບກັບ ບັນດາກະຊວງ/ຂະແໜງການ, ທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງເອົາໃຈໃສ່: (1) ສືບຕໍ່ການພັດທະນາສີມືແຮງງານ ທີ່ມີຄຸນນະພາບ ພ້ອມທັງຮັບປະກັນການມີວຽກເຮັດງານທຳ ແລະ ຮອງຮັບການຂະຫຍາຍໂຕທາງດ້ານເສດຖະກິດ; (2) ປັບປຸງກົດໝາຍ ວ່າດ້ວຍແຮງງານໃຫ້ມີປະສິດທິຜົນ; ຂະຫຍາຍການຄຸ້ມຄອງປະກັນສັງຄົມ ແລະ ມາດຕະການໃນການປົກປ້ອງສັງຄົມ; ກໍ່ສ້າງພື້ນຖານໂຄງລ່າງ, ສ້າງມາດຕະຖານແຫ່ງຊາດ; ປັບປຸງເງື່ອນໄຂການເຮັດວຽກ; ພັດທະນາສີມືແຮງງານຕາມຄວາມຕ້ອງການຕົວຈິງຂອງວຽກງານ ແລະ ຕຳແໜ່ງງານຂອງຜູ້ໃຊ້ແຮງງານ ດ້ວຍວິທີການທີ່ທັນສະໄໝ, ວ່ອງໄວ ແລະ ໂປ່ງໃສ.

7/. ມອບໃຫ້ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນເຈົ້າການປະສານສົມທົບກັບ ບັນດາກະຊວງ/ຂະແໜງການ, ທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງເອົາໃຈໃສ່: (1) ສ້າງຄວາມເຂັ້ມແຂງ ໃນຂົງເຂດວັດທະນະທຳ-ສັງຄົມ ແລະ ການທ່ອງທ່ຽວ, ການປົກປ້ອງມໍລະດົກວັດທະນະທຳ ໂດຍການເພີ່ມທະວີການນຳໃຊ້ຄວາມໄດ້ປຽບທາງດ້ານຍຸດທະສາດທີ່ຕັ້ງ, ຄວາມອຸດົມສົມບູນທາງດ້ານຊັບພະຍາກອນທຳມະຊາດ ຊີວະນານາພັນ ເພື່ອສ້າງຄວາມດຸ່ນດ່ຽງທາງດ້ານເສດຖະກິດ, ປັບປຸງປະສິດທິພາບ ແລະ ບັນຍາກາດທີ່ເອື້ອອຳນວຍ ເພື່ອດຶງດູດ ແລະ ສ້າງມູນຄ່າຕາມທ່າແຮງ ຂອງ ສປປ ລາວ ໂດຍສະໜັບສະໜູນການເພີ່ມທະວີການທ່ອງທ່ຽວດ້ານລະບົບນິເວດທາງທຳມະຊາດ ແລະ ວັດທະນະທຳອັນດີງາມ ພ້ອມທັງ ດຶງດູດນັກທ່ອງທ່ຽວ ໃຫ້ເຂົ້າມາທ່ອງທ່ຽວດົນຂຶ້ນ ແລະ ໃຊ້ຈ່າຍຫຼາຍຂຶ້ນ.

8/. ມອບໃຫ້ກະຊວງພາຍໃນ ເປັນເຈົ້າການປະສານສົມທົບກັບ ກະຊວງຍຸຕິທຳ ແລະ ກະຊວງ/ຂະແໜງການ, ທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງເອົາໃຈໃສ່: (1) ເພີ່ມທະວີການມີສ່ວນຮ່ວມໃນການຈັດຕັ້ງປະຕິບັດໂຄງການຂອງອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ, ອົງການຈັດຕັ້ງທາງສັງຄົມ, ພາກເອກະຊົນ, ບັນດາສະມາຄົມ, ມູນນິທິ ແລະ ພາກສ່ວນຕ່າງໆຂອງສັງຄົມ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX; (2) ປັບປຸງອົງປະກອບການຈັດຕັ້ງທາງສັງຄົມ, ການພັດທະນາໄວໜຸ່ມ ເພື່ອຊຸກຍູ້ການເຕີບໂຕສີຂຽວ ແລະ ຍືນຍົງ; (3) ຍົກສູງປະສິດທິພາບ ແລະ ຄຸນນະພາບ ໃນການບໍລິຫານລັດ ໂດຍສະເພາະຂະບວນການຍຸຕິທຳ ໃຫ້ເປັນບູລິມະສິດ, ການຕັດສິນທີ່ມີຜົນສັກສິດ, ການໄກ່ເກ່ຍຂັ້ນບ້ານ ແລະ ສາມາດໃຫ້ຄຳປຶກສາກົດໝາຍ ແລະ ເປັນທີ່ເພິ່ງໃຫ້ປະຊາຊົນ ຢ່າງແທ້ຈິງ.

9/. ມອບໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການປະສານສົມທົບກັບ ກະຊວງ/ຂະແໜງການ, ທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງເອົາໃຈໃສ່: (1) ສືບຕໍ່ລະດົມແຫ່ງທຶນເພີ່ມຕື່ມຈາກພາຍໃນ ແລະຕ່າງປະເທດ, ພ້ອມທັງ ສ້າງເງື່ອນໄຂໃຫ້ພາກເອກະຊົນມີສ່ວນຮ່ວມໃນການພັດທະນາເສດຖະກິດ-ສັງຄົມ ໂດຍສະເພາະແມ່ນການປະກອບສ່ວນທຶນທີ່ຮັບປະກັນຄວາມຍືນຍົງໃຫ້ແກ່ການພັດທະນາທຶນມະນຸດ; (2) ສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການດຳເນີນທຸລະກິດ, ສ້າງຂີດຄວາມສາມາດໃນການແຂ່ງຂັນຂອງພາກທຸລະກິດພາຍໃນ ດ້ວຍການສ້າງສະພາບແວດລ້ອມການດຳເນີນທຸລະກິດທີ່ເອື້ອອຳນວຍໃຫ້ດີຂຶ້ນ.

10/. ມອບໃຫ້ກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າການປະສານສົມທົບກັບ ກະຊວງ/ຂະແໜງການ, ທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງເອົາໃຈໃສ່: (1) ສົ່ງເສີມການຜະລິດກະສິກຳເປັນສິນຄ້າ ໂດຍແນໃສ່ປະລິມານຜົນຜະລິດ ແລະ ຄຸນນະພາບ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຊົມໃຊ້ຂອງຕະຫຼາດພາຍໃນ ແລະ ຕ່າງປະເທດ; (2) ສປປ ລາວ ໄດ້ມີການກຳນົດບັນດານິຕິກຳ ໃນການແກ້ໄຂບັນຫາ ແລະ ສິ່ງທ້າທາຍຕ່າງໆ ໄດ້ຢ່າງຄົບຖ້ວນ ແຕ່ຍັງຂາດການຈັດຕັ້ງປະຕິບັດໃຫ້ມີຜົນສັກສິດ ທັງຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ເຊັ່ນ: ການປົກປັກຮັກສາປ່າໄມ້ ມີຄວາມຈຳເປັນສ້າງນິຕິກຳລຸ່ມກົດໝາຍສະເພາະ ເພື່ອສົ່ງເສີມ ແລະ ປົກປັກຮັກສາເນື້ອທີ່ປ່າໄມ້ ໃຫ້ມີການຂະຫຍາຍຕົວ ພ້ອມທັງສົ່ງເສີມໃຫ້ພາກທຸລະກິດ ເຂົ້າມາລົງທຶນທາງດ້ານຂະແໜງກະສິກຳ ແລະ ປ່າໄມ້ ໃຫ້ຫຼາຍຂຶ້ນ; (3) ຊຸກຍູ້ການສ້າງນະວັດຕະກຳແບບໃໝ່ດ້ານກະສິກຳ ທີ່ທົນທານຕໍ່ການປ່ຽນແປງດິນຟ້າອາກາດ ແລະ ລະບົບນິເວດ  ເພື່ອສົ່ງເສີມການຜະລິດກະສິກຳທີ່ຫຼາກຫຼາຍ ແລະ ເປັນມິດຕໍ່ສິ່ງແວດລ້ອມ; (4) ເພີ່ມທະວີການລົງທຶນເຂົ້າໃນການສ້າງຄວາມອາດສາມາດໃຫ້ແກ່ພະນັກງານລັດຖະກອນ ໃນຂົງເຂດກະສິກຳ, ຊາວກະສິກອນ ແລະ ສົ່ງເສີມການເຂົ້າເຖິງພື້ນໂຄງລ່າງສາທາລະນະ ແລະ ຊັບພະຍາກອນທຳມະຊາດຈຳນວນໜຶ່ງ ເພື່ອຮັບປະກັນຊີວິດການເປັນຢູ່ ຂອງປະຊາຊົນ.

11/. ມອບໃຫ້ກະຊວງປ້ອງກັນຄວາມສະຫງົບ ເປັນເຈົ້າການປະສານສົມທົບກັບ ກະຊວງ/ຂະແໜງການ, ທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງເອົາໃຈໃສ່: (1) ທົບທວນຄືນການຈັດຕັ້ງປະຕິບັດ ບັນດາສິ່ງທ້າທາຍ ແລະ ຄວາມຫຍຸ້ງຍາກໃນການແກ້ໄຂບັນຫາຢາເສບຕິດ ເພື່ອຊຸກຍູ້ສົ່ງເສີມຂະຫຍາຍການປະສານງານຮ່ວມມືກັນກັບແຕ່ລະພາກສ່ວນຫຼາຍຂຶ້ນ; (2) ສະຫຼຸບລາຍງານການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍຢາເສບຕິດ, ເຊິ່ງໄດ້ຮັບການຂະຫຍາຍເວລາໃນການຈັດຕັ້ງປະຕິບັດ ຮອດປີ 2025.

12/. ມອບໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນເຈົ້າການປະສານສົມທົບກັບ ກະຊວງ/ຂະແໜງການ, ທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງເອົາໃຈໃສ່: (1) ປັບປຸງປະສິດທິພາບ ແລະ ບັນຍາກາດການລົງທຶນທີ່ເອື້ອອຳນວຍ ເພື່ອດຶງດູດ ແລະ ສ້າງມູນຄ່າຕາມທ່າແຮງ ຂອງ ສປປ ລາວ ເຊັ່ນ: ການລົງທຶນດ້ານພະລັງງານທົດແທນ, ການທ່ອງທ່ຽວທີ່ຕິດພັນກັບທຳມະຊາດ ແລະ ຄວາມຍືນຍົງ ເຊິ່ງທຳມະຊາດເປັນຊັບສິນຂອງ ສປປ ລາວ ຄວນຕ້ອງປົກປັກຮັກສາ ແລະ ມີແບບແຜນການນຳໃຊ້ໃຫ້ດີ; (2) ຊຸກຍູ້ການສ້າງນະວັດຕະກຳແບບໃໝ່ດ້ານກະສິກຳ ທີ່ທົນທານຕໍ່ການປ່ຽນແປງດິນຟ້າອາກາດ ແລະ ລະບົບນິເວດ  ເພື່ອສົ່ງເສີມການຜະລິດກະສິກຳທີ່ຫຼາກຫຼາຍ ແລະ ເປັນມິດຕໍ່ສິ່ງແວດລ້ອມ;

(3) ສ້າງຂີດຄວາມສາມາດ, ສະໜອງເຕັກນິກ ແລະ ອຸປະກອນ ເຂົ້າໃນວຽກງານການວັດແທກທີ່ດິນ ພ້ອມທັງ ກຳນົດເຂດແດນຂອງປະຊາຊົນ ໃຫ້ຖືກຕ້ອງ ແລະ ສອດຄ່ອງກັບສະພາບຄວາມເປັນຈິງ; (4) ການປົກປັກຮັກສາສິ່ງແວດລ້ອມ ແລະ ການສົ່ງເສີມການລົງທຶນ ຕ້ອງສະໜັບສະໜູນເຊິ່ງກັນ ແລະ ກັນ ເພື່ອຮັບປະກັນຄວາມຍືນຍົງ ແລະ ການພັດທະນາຕາມທິດສີຂຽວ ແລະ ການຂະຫຍາຍຕົວທາງດ້ານເສດຖະກິດທີ່ມີສ່ວນຮ່ວມຂອງພາກທຸລະກິດ ແລະ ສັງຄົມທຸກພາກສ່ວນ ຢ່າງທົ່ວເຖິງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີ,
ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ສົມກຽດ ພະສີ

<u>ບ່ອນນຳສົ່ງ:</u>

| | |
|---|---|
| - ທ່ານ ນາຍົກ, ຮອງນາຍົກລັດຖະມົນຕີ | 05 ສະບັບ; |
| - ຫ້ອງວ່າການສູນກາງພັກ | 01 ສະບັບ; |
| - ຫ້ອງວ່າການສຳນັກງານປະທານປະເທດ | 01 ສະບັບ; |
| - ຄະນະເລຂາທິການສະພາແຫ່ງຊາດ | 01 ສະບັບ; |
| - ສະຫະພັນກຳມະບານລາວ | 01 ສະບັບ; |
| - ສູນກາງສະຫະພັນແມ່ຍິງລາວ | 01 ສະບັບ; |
| - ສູນກາງຊາວໜຸ່ມປະຊາຊົນ ປະຕິວັດລາວ | 01 ສະບັບ; |
| - ຄະນະ ຫສນຍ | 04 ສະບັບ; |
| - ເກັບມ້ຽນ | 01 ສະບັບ. |